ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ສືບຕໍ່ເຜີຍແຜ່ວຽກງານສະຖາບັນການເງິນ ໃຫ້ພະນັກງານ ແລະ ປະຊາຊົນ




ໃນຕອນບ່າຍຂອງວັນທີ 28 ມີນາ 2018 ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບອໍານາດການປົກຄອງເມືອງປາກງື່ມ ໄດ້ຈັດຕັ້ງການເຜີຍແຜ່ຄວາມຮູ້ກ່ຽວກັບສະຖາບັນການເງິນ ແລະ ຮອບຮູ້ເລື່ອງເງິນ ຢູ່ທີ່ຫ້ອງປະຊຸມໃຫຍ່ຂອງໂຮງໝໍເມືອງປາກງື່ມ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ກອງມີ ສີສະໝຸດ ຮອງເຈົ້າເມືອງງປາກງື່ມ ພ້ອມນີ້, ກໍ່ມີບັນດາພະນັກງານຫຼັກແຫຼ່ງ, ບັນດານາຍບ້ານ, ປກສ ກຸ່ມບ້ານ ແລະ ບັນດາແນວໂຮມບ້ານເຂົ້າຮ່ວມ.

ການຈັດຕັ້ງເຜີຍແຜ່ຄວາມຮູ້ກ່ຽວກັບສະຖາບັນການເງິນ ແລະ ຮອບຮູ້ເລື່ອງເງິນໃນຄັ້ງນີ້ ແມ່ນໄດ້ດໍາເນີນໄປເປັນເວລາ ເຄິ່ງວັນ ເຊິ່ງຜູ້ເຂົ້າຮ່ວມໄດ້ຮຽນຮູ້ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ທຫລ, ຮູບແບບສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ, ຂອບເຂດການເຄື່ອນໄຫວດໍາເນີນທຸລະກິດ ແຕ່ລະຮູບແບບການຄຸ້ມຄອງ ແລະ ຂັ້ນຕອນການຂໍອະນຸຍາດດໍາເນີນທຸລະກິດ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຄວາມຮອບຮູ້ເລື່ອງເງິນ, ລັກສະນະຂອງທຸລະກິດຕ່ອງໂສ້ ແລະ ວຽກງານການຕ້ານ, ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຊິ່ງວິທະຍາກອນທີ່ມາຈາກ ທຫລ ກໍ່ໄດ້ຍົກເອົາແຕ່ລະບັນຫາມາໃຫ້ຜູ້ເຂົ້າຮ່ວມໄດ້ແລກປ່ຽນຄວາມຄິດຄວາມເຫັນ ດ້ານວິຊາການຢ່າງກົງໄປກົງມາຮ່ວມກັນ.




ທ່ານຮອງເຈົ້າເມືອງໆປາກງື່ມ ໄດ້ກ່າວວ່າ: ເພື່ອເປັນການສ້າງຄວາມເຂົ້າໃຈ ໃຫ້ແກ່ບັນດາອຳນາດການປົກຄອງບ້ານ ແລະ ບັນດາພະນັກງານທຸກຂັ້ນຂອງເມືອງປາກງື່ມ ໄດ້ມີຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບວຽກງານສະຖາບັນການເງິນ ແລະ ສາມາດຕິດຕາມກວດກາການເຄື່ອນໄຫວຂອງສະຖາບັນການເງິນ ທີ່ໄດ້ຮັບອະນຸຍາດຈາກ ທຫລ ນັ້ນໄດ້ຈັດຕັ້ງເຄື່ອນໄຫວຖືກກັບຂອບເຂດສິດຂອງຕົນ ແລະ ລະບຽບການຂອງ ທຫລ ທີ່ໄດ້ວາງອອກ.






ການຈັດຕັ້ງການເຜີຍແຜ່ໃນຄັ້ງນີ້ ເປັນຄັ້ງທີສອງ ເຊິ່ງຄັ້ງກ່ອນໄດ້ຈັດຂຶ້ນຢູ່ທີ່ເມືອງສັງທອງ ແລະ ໃນຄັ້ງຕໍ່ໄປມີເປົ້າໝາຍແນໃສ່ບັນດາເມືອງໃນຂອບເຂດນະຄອນຫຼວງວຽງຈັນ ໂດຍມີຈຸດປະສົງເພື່ອຍົກລະດັບຄວາມຮູ້ກ່ຽວກັບວຽກງານສະຖາບັນການເງິນ ແລະ ຄວາມຮູ້ດ້ານການເງິນໃຫ້ແກ່ບັນດາອຳນາດການປົກຄອງໃນຂັ້ນຮາກຖານໃຫ້ເຂົ້າເຈົ້າສາມາດເປັນຫູເປັນຕາຕິດຕາມກວດກາ ແລະ ລາຍງານກ່ຽວກັບສະຖາບັນການເງິນທີ່ເຄື່ອນໄຫວຜິດປົກກະຕິ  ໃຫ້ແກ່ ທຫລ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

**# ຂ່າວ-ພາບ: ສົມອົກ ເຄນຄຳແພງ**

## ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ